**ການຕໍ່ສູ້ກັບຄວາມຮຸນແຮງຕໍ່ແມ່ຍິງໂດຍນຳໃຊ້ເຄື່ອງດິຈິຕອນເຂົ້າໃນຂະແໜງຍຸຕິທຳ ແລະ ຕຳຫຼວດ.**

ວັນທີ 12 ເດືອນມັງກອນ 2022 ທີ່ນະຄອນຫຼວງວຽງຈັນ

ອົງການການຮ່ວມມືສາກົນ ສ.ເກົາຫຼີ (KOICA) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP)ປະຈຳສປປ ລາວ ໄດ້ສະໜັບສະໜູນບັນດາອົງການໃນຂະແໜງຍຸຕິທຳ ແລະ ຕຳຫຼວດ ດ້ວຍການມອບອຸປະກອນໄອຊີທີ ເພື່ອນຳໃຊ້ເຂົ້າໃນການປ້ອງກັນ ແລະ ຕອບໂຕ້ກັບຄວາມຮຸນແຮງຕໍ່ແມ່ຍິງ ໂດຍຜ່ານໂຄງການຄັນຮົ່ມ.

ໂຄງການ ຄັນຮົ່ມ ແມ່ນໂຄງການທີ່ສະໜັບສະໜູນລັດຖະບານລາວ ໂດຍຜ່ານສູນກາງສະຫະພັນແມ່ຍິງລາວ ໃນການສ້າງຂີດຄວາມສາມາດຂອງສະຖາບັນ ເພື່ອຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ 5 ປີ (NAPEVAW) ເປັນຕົ້ນແມ່ນບັນດາອົງການຫຼັກໃນຂະແໜງການສັງຄົມ ແລະ ຍຸຕິທຳ. ໂຄງການນີ້ມີຈຸດປະສົງເພື່ອຫຼຸດຜ່ອນການຈຳແນກ ແລະ ຄວາມຮຸນແຮງຕໍ່ແມ່ຍິງ ໂດຍການລວມເອົາຄວາມພະຍາຍາມຂອງພາກສ່ວນທີ່ກ່ຽວຂ້ອງຕ່າງໆ ລວມທັງການສ້າງຄວາມສາມາດຂອງຜູ້ຮັບຜິດຊອບ, ເພີ່ມທະວີການຮັບຮູ້ກ່ຽວກັບການບໍລິການໃຫ້ຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ແລະ ເພີ່ມທະວີການປະສານງານໃນທຸກຂະແໜງການກຽວຂ້ອງ.

ໃນປີ 2021, UNDP ໄດ້ເຮັດການປະເມີນຄວາມຕ້ອງການ ຄວາມສາມາດຂອງຂະແໜງຍຸຕິທຳ ແລະ ຕຳຫຼວດ ເພື່ອປະຕິບັດແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ 5 ປີ (NAPEVAW), ລວມມີ ກະຊວງຍຸຕິທຳ , ກະຊວງປ້ອງກັນຄວາມສະຫງົບ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ. ການປະເມີນດັ່ງກ່າວແມ່ນໄດ້ພົບກັບສິ່ງທ້າທາຍ ແລະ ປະເຊີນກັບຄວາມຊັກຊ້າຢ່າງຫຼວງຫຼາຍ ອັນເນື່ອງມາຈາກມາດຕະການລ໋ອກດາວ(Lockdown) ທີ່ຫ້າມຈັດການປະຊຸມແບບເຊິ່ງຫນ້າ ແລະ ບັນດາອົງການຂະແຫນງຍຸຕິທຳ  ແລະ ຕຳຫຼວດແມ່ນມີຄວາມຈຳກັດເຄື່ອງມືອຸປະກອນດ້ານໄອຊີທີ( ICT) ເພື່ອເຂົ້າຮ່ວມກອງປະຊຸມທາງໄກ (Online). ນອກຈາກນັ້ນ, ການປະເມີນຍັງຊີ້ໃຫ້ເຫັນຊ່ອງຫວ່າງທີ່ສຳຄັນໃນຂະແຫນງຍຸຕິທຳ ແລະ ຕຳຫຼວດ ໃນດ້ານເຄື່ອງມືດິຈິຕອນສຳລັບການສື່ສານ, ການປະສານງານ ແລະການຮວບຮວມຂໍ້ມູນ ເຊິ່ງຈຳເປັນຕ້ອງຕື່ມຂໍ້ມູນເພື່ອຮັບປະກັນວ່າອົງການໃນຂະແໜງຍຸຕິທຳ ແລະ ຕຳຫຼວດສາມາດມີສ່ວນຮ່ວມຢ່າງເຕັມສ່ວນໃນການຢຸດຕິຄວາມຮຸນແຮງຕໍ່ແມ່ຍິງໂດຍການຈັດຕັ້ງປະຕິບັດແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ 5 ປີ (NAPEVAW).

ທ່ານ Sangjun Kim, ຮັກສາການ ຜູ້ອຳນວຍການອົງການຮ່ວມມືສາກົນ ສ.ເກົາຫຼີ ເນັ້ນໜັກວ່າ “ອຸປະກອນ ICT ຈະເປັນເຄື່ອງມືທີ່ສຳຄັນ ເພື່ອຊ່ວຍໃຫ້ຂະແໜງຍຸຕິທຳ ແກ້ໄຂສິ່ງທ້າທາຍທີ່ເຂົາເຈົ້າອາດຈະປະເຊີນໃນການຈັດຕັ້ງປະຕິບັດ ແຜນດຳເນີນງານແຫ່ງຊາດເພື່ອປ້ອງກັນ ແລະ ລຶບລ້າງຄວາມຮຸນແຮງຕໍ່ແມ່ຍິງ 5 ປີ (NAPEVAW) ແລະ ຊ່ວຍປົກປ້ອງແມ່ຍິງລາວທຸກຄົນທີ່ມີຄວາມສ່ຽງຕໍ່ຄວາມຮຸນແຮງ.”

ທ່ານນາງ Ricarda Rieger, ຜູ້ຕາງໜ້າອົງການ UNDP, ກ່າວຕື່ມອີກວ່າ: “ປີ 2022 ເປັນປີສຳຄັນຂອງໂຄງການ ຄັນຮົ່ມ ແລະ ອຸປະກອນ ICT ນີ້ຈະຮັບປະກັນວ່າ ວຽກງານຂອງພວກເຮົາເພື່ອຢຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງໃນ ສປປ ລາວ ກັບຂະແໜງຍຸຕິທຳ ແລະ ຕຳຫຼວດ, ສູນກາງສະຫະພັນແມ່ຍິງລາວ ແລະ ຄະນະກຳມະທິການເພື່ອຄວາມກ້າວໜ້າແມ່ຍິງ, ແມ່ ແລະ ເດັກແຫ່ງຊາດ ບໍ່ໄດ້ຮັບການຂັດຂວາງຈາກ ພະຍາດໂຄວິດ-19 ແລະ ພວກເຮົາຍັງສາມາດເກັບກຳຂໍ້ມູນທີ່ສຳຄັນທີ່ພວກເຮົາຕ້ອງການເພື່ອໃຫ້ວຽກງານຂອງພວກເຮົາສຳເລັດ."

ທ່ານ ນາງ ສຸກພາພອນ ພານິດ, ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ, ສູນກ່າງສະຫະພັນແມ່ຍິງລາວ ໄດ້ກ່າວວ່າ: “ອຸປະກອນໄອຊີທີ ມີປະໂຫຍດຫຼາຍສຳລັບພວກເຮົາ ເພາະພວກເຮົາສາມາດສືບຕໍ່ເຮັດວຽກທາງອິນເຕີເນັດ ເພື່ອປັບປຸງການຕອບ

ສະໜອງ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ໂດຍສະເພາະໃນການພັດທະນາການແນະນຳພາກປະຕິບັດຕົວຈິງ ແລະ ເຄື່ອງມືສຳລັບຂະແໜ່ງຍຸຕິທຳໃນປີ 2022."

ໃນປີ 2022, ພາຍໃຕ້ໂຄງການ ຄັນຮົ່ມ ເຊິ່ງເປັນໂຄງການຮ່ວມກັບ UNFPA ແລະ ໄດ້ຮັບການສະໜັບສະໜູນຈາກ KOICA, UNDP ຈະສືບຕໍ່ຮ່ວມມືກັບບັນດາອົງການຂະແໜງຍຸຕິທຳ ແລະ ຕຳຫຼວດ, ສູນກາງສະຫະພັນແມ່ຍິງລາວ ແລະ ຄະນະກຳມະທິການແຫ່ງຊາດເພື່ອຄວາມກ້າວໜ້າແມ່ຍິງ ແລະ ແມ່-ເດັກ ເພື່ອພັດທະນາມາດຕະຖານຂັ້ນຕອນການດຳເນີນງານເພື່ອຮັບປະກັນໃຫ້ມີຄຳແນະນຳທີ່ຈະແຈ້ງສຳລັບທຸກຄົນ. ຂະແໜງການຕ່າງໆ ເພື່ອປະສານງານຢ່າງໃກ້ຊິດ ໃນວຽກງານສະກັດກັ້ນຄວາມຮຸນແຮງຕໍ່ແມ່ຍິງ, ສະໜອງການບໍລິການຕໍ່ຜູ້ເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ແລະ ດຳເນີນຄະດີຜູ້ກໍ່ຄວາມຮຸນແຮງດັ່ງກ່າວຜ່ານລະບົບຍຸຕິທຳ ຢູ່ໃນ ສປປ ລາວ.